## ກາເຟຊຸມຊົນແກ່ວແສດ

# ຄູ່ມື

# ເຕັກນິກການກ້າເບ້ຍກາເຟ



## ພາກນຳສະເໜີ

ຄູ່ມືສະບັບນີ້ໄດ້ພັດທະນາຂຶ້ນບົນພື້ນຖານປະສົບການຈິງຂອງພວກເຮົາທີ່ເປັນຊາວສວນກາເຟຢູ່ໃນແຂວງຊຽງຂວາງ. ພວກເຮົາໄດ້ມີການປູກກາເຟຢູ່ຮົ່ມຂອງປ່າໄມ້ໃນເຂດກຸ່ມບ້ານແກ່ວແສດມາເກືອບ 20 ປີແລ້ວ.  ໃນໄລຍະນັ້ນ ພວກເຮົາກໍ່ໄດ້ຮັບການແນະນຳດ້ານເຕັກນິກ ແລະ ການສະໜັບສະໜູນຈາກພາກລັດ, ບັນດາໂຄງການ ແລະ ບໍລິສັດ ແຕ່ວ່າຄວາມຮູ້ທີ່ເປັນປະໂຫຍດ ແລະ ທັກສະຕ່າງໆແມ່ນລ້ວນແຕ່ເກີດຈາກການເຮັດຕົວຈິງຂອງພວກເຮົາ ຊຶ່ງລວມມີການປູກ, ການເຮັດຝຸ່ນບົ່ມ, ການບົວລະບັດ-ຄຸ້ມຄອງສວນ, ການແປຮູບ, ການຕາກ ແລະ ການຈຳໜ່າຍກາເຟຂອງພວກເຮົາ.
ພວກເຮົາມີຄວາມປະສົງຢາກແບ່ງປັນປະສົບການທີ່ມີໃຫ້ແກ່ຊາວສວນ, ຊາວກະສິກອນອື່ນໆ ແລະພວກເຮົາກໍໄດ້ຕ້ອນຮັບແຂກຫຼາຍຮ້ອຍຄົນທີ່ມາຢ້ຽມຢາມເບິ່ງສວນກາເຟ ແລະ ສູນແປຮູບຂອງພວກເຮົາ. ຄູ່ມືສະບັບນີ້ແມ່ນເປັນການສັງລວມບັນດາເຕັກນິກທີ່ພວກເຮົາໄດ້ນຳໃຊ້ ແລະ  ພວກເຮົາຂໍແນະນຳໃຫ້ທ່ານຄັດເລືອກ ແລະ ດັດປັບເຕັກນິກນີ້ໃຫ້ສອດຄ່ອງກັບເງື່ອນໄຂຕົວຈິງຂອງທ່ານ. ພວກເຮົາຫວັງຢ່າງຍິ່ງວ່າຂໍ້ມູນນີ້ຈະເປັນປະໂຫຍດຫຼາຍໃຫ້ແກ່ຜູ້ຜະລິດກາເຟອີກຫຼາຍທ່ານ.
ດ້ວຍຄວາມປາຖະໜາດີຂອງຊາວສວນກາເຟຈາກບ້ານປຽງ, ບ້ານຜາຮີ້ງ, ບ້ານປຸງ, ບ້ານຕັນໃຕ້ ແລະບ້ານຕັນເໜືອ.

## ຄຳຂອບໃຈ

ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ (ກສປ), ກະຊວງກະສິກຳ ແລະ ປ່າໄມ້ ມີຄວາມຍິນດີທີ່ໄດ້ເຮັດວຽກຮ່ວມກັບຊາວສວນກາເຟຢູ່ເຂດກຸ່ມບ້ານແກ່ວແສດ. ວິທີການຜະລິດແບບກະສິກຳ-ປ່າໄມ້ ຫຼືວັນນະກະສິກຳ ທີ່ນຳໃຊ້ໂດຍຊາວສວນເຫຼົ່ານີ້ແມ່ນເປັນຕົວຢ່າງທີ່ດີເລີດຂອງກະສິກຳສະອາດ ແລະການຜະລິດກະສິກຳທີ່ຍືນຍົງ ຕາມນະໂຍບາຍສົ່ງເສີມຂອງກະຊວງກະສິກຳ ແລະ ປ່າໄມ້, ພາຍໃຕ້ຂອບວຽກຍຸດທະສາດຂອງລັດຖະບານລາວໃນການເຕີບໂຕຕາມທິດສີຂຽວ. ມີຫຼາຍອົງການຈັດຕັ້ງທີ່ໄດ້ປະກອບສ່ວນເຮັດໃຫ້ເລື່ອງນີ້ມີຜົນສຳເລັດ ເປັນຕົ້ນແມ່ນໂຄງການບໍລິການສົ່ງເສີມກະສິກຳຮອບດ້ານຫຼື (LURAS) ຊຶ່ງໄດ້ຈັດຕັ້ງປະຕິບັດໂດຍ ອົງການ Helvetas ຮ່ວມກັບ ກົມສົ່ງເສີມເຕັກນິກ ແລະປຸງແຕ່ງກະສິກຳ ທີ່ໄດ້ຮັບທຶນສະໜັບສະໜູນໂດຍ ອົງການສະວິດຮ່ວມມືເພື່ອການພັດທະນາ (SDC).
ພວກເຮົາຂໍສະແດງຄວາມຂອບໃຈຢ່າງສູງຕໍ່ການຮ່ວມມືທີ່ດີຈາກພະແນກກະສິກຳ ແລະ ປ່າໄມ້ແຂວງຊຽງຂວາງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຄູນ ລວມທັງພາກເອກະຊົນ 2 ບໍລິສັດຄື:  ກາເຟເມືອງຊຽງ (Muang Xieng Coffee) ແລະ ກາເຟຄອມມາ (Comma Coffee).
***ສິ່ງສຳຄັນທີ່ສຸດສຳລັບຄູ່ມືສະບັບນີ້ແມ່ນເປັນການສ້າງຂຶ້ນໂດຍຊາວກະສິກອນ ເພື່ອຊາວກະສິກອນເອງ, ນີ້ແມ່ນຄວາມຮູ້ຂອງພວກເຂົາເອງ.*** ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳມີຄວາມພາກພູມໃຈທີ່ສຸດໃນການເຮັດໜ້າທີ່ເປັນຜູ້ສັງລວມ ແລະ ແຈກຢາຍຄູ່ມມືສະບັບນີ້.

ຫົວໜ້າ ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ

ທ. ຊາງສະຫວັນ ພົມພະລາວົງ

**ສາລະບານ**


1. ການກ້າແກ່ນກາເຟ ....................................................................1

ກ. ວິທີການຄັດເລືອກແກ່ນພັນທີ່ມີຄຸນະພາບ ............................................1

ຂ. ການກະກຽມໜານກ້າແກ່ນກາເຟ ..........................................................4

ຄ. ວິທີເອົາແກ່ນລົງໜານກ້າ.....................................................................6

ງ. ການບົວລະບັດຮັກສາໜານກ້າ ແລະ ການດູແລຮັກສາເບ້ຍກາເຟ ....................7

ຈ. ການສັງເກດເບ້ຍເວລາທີ່ເໝາະສົມ ເພື່ອທີ່ຈະເອົາເຂົ້າເບົ້າ ..........................8

ສ. ການກະກຽມປະສົມດິນສຳລັບຮ່າຍເບົ້າ ................................................9

ຊ. ການດູແລຮັກສາເບົ້າກ່ອນໃສ່ເບ້ຍ ......................................................10

ຍ. ວິທີການເລືອກເບ້ຍທີ່ດີສຳລັບເອົາໃສ່ເບົ້າ ...........................................11

ດ. ວິທີການເອົາເບ້ຍເຂົ້າເບົ້າ..................................................................12

ຕ. ບ່ອນເກັບຮັກສາເບ້ຍ ....................................................................... 14

ຖ. ການບົວລະບັດຮັກສາສວນກ້າ .........................................................15

# 1. ການກ້າແກ່ນກາເຟ

## ກ. ວິທີການຄັດເລືອກແກ່ນພັນທີ່ມີຄຸນະພາບ

ເນື່ອງຈາກກາເຟເປັນພືດອາຍຸຍາວນານ 10 ປີຂຶ້ນໄປ, ດັ່ງນັ້ນການຄັດເລືອກສາຍພັນແນວພັນທີ່ເໝາະສົມ ແລະ ເມັດພັນທີ່ມີຄຸນະພາບຈຶ່ງມີຜົນຕໍ່ການຈະເລີນເຕີບໂຕ, ສະມັດຕະພາບ ແລະ ຄຸນະພາບຂອງຜົນຜະລິດ.

<u>**ຂັ້ນຕອນວິທີການເອົາເມັດພັນກາເຟທີ່ມີຄຸນະພາບມີດັ່ງນີ້:**</u>

❖ ການເກັບເມັດແນວພັນກາເຟ



- ເກັບເອົາໝາກກາເຟສ່ວນກາງຂອງຕົ້ນ ແລະ ເອົາສ່ວນກາງຂອງງ່າ.
- ເລືອກເອົາ ໝາກທີ່ໃຫຍ່ ແລະ ສຸກດີ ແລະ ອາຍຸຂອງຕົ້ນ 5 ປີຂຶ້ນໄປ
- ເລືອກເອົາຊ່ວງກາເຟໃນຕົ້ນທີ່ສຸກຫຼາຍທີ່ສຸດ, ໃນຕົ້ນໜຶ່ງເລືອກເອົາ 50 ຫາ 100 ໜ່ວຍ.

❖ ການຄັດໝາກຟູອອກ ເພື່ອເອົາໝາກຈົມ

ຫລັງຈາກໄດ້ກາເຟຕາມຈຳນວນທີ່ຕ້ອງການແລ້ວ, ໃຫ້ເອົາລົງແຊ່ນ້ຳ

ຄົນ ແລະ ຕັກເອົາໝາກທີ່ຟູນ້ຳອອກ ເພື່ອເອົາແຕ່ໝາກຈົມ





❖ ການເອົາເປືອກແດງອອກດີທີ່ສຸດແມ່ນໃຊ້ມືບີບອອກ ຫຼື ບໍ່ດັ່ງນັ້ນອີ້ວດ້ວຍມືກໍ່ໄດ້, ແຕ່ບໍ່ໃຫ້ເມັດແຕກ ແລະ ຖືກເຄື່ອງອີ້ວກັດ



ການບີບເອົາເປືອກແດງອອກ



ການອີ້ວດ້ວຍມື

❖ ຂັ້ນຕອນການໝັກ: ພາຍຫຼັງອີ້ວກາເຟແລ້ວນຳເອົາກາເຟມາໝັກບໍ່ໃຫ້ເກີນ 18 ຊົ່ວໂມງ ຄວນໝັກໃນອ່າງ ຫຼື ຊາມທີ່ສະອາດ ແລະ ຮັກສາອຸນຫະພູມການໝັກໃຫ້ສະເໝີກັນ

❖ ຂັ້ນຕອນການລ້າງ: ນຳເອົາກາເຟທີ່ໝັກໄດ້ແລ້ວມາລ້າງດ້ວຍນ້ຳສະອາດ, ລ້າງເມືອກກາເຟອອກຈົນໝົດ ແລະ ໃຊ້ມືກຳເມັດກາເຟແລ້ວ ຂວ້າມມືລົງ ຖ້າເມັດກາເຟບໍ່ຕິດມືສະແດງວ່າລ້າງເມືອກດີແລ້ວ

❖ ຂັ້ນຕອນການຕາກ: ນຳເອົາກາເຟທີ່ລ້າງດີແລ້ວມາຕາກໃນເຮືອນຮົ່ມ ເພື່ອບໍ່ໃຫ້ຖືກແສງແດດແກ່ ຫຼື ລົມ, ຄົນແກ່ນທີ່ກຳລັງຕາກທຸກໆ 2 ຊົ່ວໂມງໃນຊ່ວງ 3 ມື້ທຳອິດ



❖ ການວັດແທກຄວາມຊຸ່ມຂອງແກ່ນກາເຟ: ແທກຄວາມຊຸ່ມໃຫ້ໄດ້ 20%



❖ ການຄັດເລືອກເມັດກາເຟແນວພັນທີ່ບໍ່ໄດ້ຄຸນະພາບອອກ

ພາຍຫຼັງການຕາກກາເຟແນວພັນ ແລະ ວັດແທກຄວາມຊຸ່ມໃຫ້ໄດ້ຕາມມາດຕະຖານແລ້ວ, ຕ້ອງໄດ້ຄັດກາເຟທີ່ບໍ່ໄດ້ຄຸນະພາບອອກ



ເມັດກາເຟແນວພັນ ຄຸນະພາບ
ທີ່ຄວນນຳໄປ ກ້າແກ່ນ

**ກາເຟທີ່ຕ້ອງຄັດອອກ**

ກາເຟເມັດແຕກ ຫຼື ຖືກເຄື່ອງອື້ວກັດ



ກາເຟເມັດເປັນແມງ



ກາເຟເມັດສາມຫຼ່ຽມ



ກາເຟເມັດມົນ ຫຼື ເມັດນ້ອຍ



## ຂ. ການກະກຽມໝານກ້າແກ່ນກາເຟ

ອຸປະກອນທີ່ຕ້ອງນຳໃຊ້ປະກອບມີ: ຜ້າຢາງໃສຄຸມໝານ, ຜ້າກັນແສງ ແລະ ໄມ້ໄຜ່ ຫຼື ໄມ້ທົ່ວໄປ

### ວິທີທີ 1:




- ໃຊ້ໄມ້ແປ້ນ ຫຼື ໄມ້ທົ່ວໄປສຳລັບເຮັດຂອບໝານກ້າ
- ດິນປະສົມຕ້ອງເປັນດິນຜຸພຸ່ຍ (ບໍ່ປົນດິນດາກ)
- ລະດັບຂອງດິນແມ່ນໃຫ້ເຖິງຂອບເທິງຂອງໝານກ້າ
- ເອົາຜ້າຢາງໃສປົກໃສ່ໂຄງໄມ້ທີ່ກຽມໄວ້
- ໃຊ້ຜ້າກັນແສງປົກເທິງແພຢາງໃສ
- ປິດຜ້າປົກໃຫ້ແຈບເພື່ອເຮັດໃຫ້ອາກາດຂ້າງໃນອຸ່ນຂຶ້ນ

## ວິທີທີ 2:

ເຮັດໜານກ້າ ໂດຍໜານກ້າມີລວງສູງ 10 ຊມ, ບໍ່ໄດ້ນຳໃຊ້ໄມ້ໄຜ່ມາມຸງເຮັດໂຄ້ງດ້ານເທິງ ແລະ ນຳຜ້າຢາງມາຄຸມໂດຍຕຶງ



## ຄ. ວິທີເອົາແກ່ນລົງໜານກ້າ

1. ຫົດນ້ຳໜານກ້າ



2. ໃຊ້ໄມ້ປາຍແຫຼມເຮັດເປັນຮ່ອງແຖວຍາວ, ເຫຼິກປະມານ 1-2 ຊມ ແລະ ຫ່າງກັນ ປະມານ 5 ຊມ



3. ເອົາແກ່ນຂ້ວາມໜ້າລົງ, ໂດຍຈິ່ງໄລຍະ ຫ່າງໄວ້ປະມານ 5 ຊມ ໃນແຖວດຽວກັນ




4. ເອົາດິນທີ່ປະສົມໄວ້ ປົກໜ້າໜານກ້າ ແກ່ນກາເຟຄວນຈະລົງເຫຼິກປະມານ 1-2 ຊມ ຫຼັງຈາກເອົາດິນປົກ



5. ເອົາເຟືອງປົກໜ້າໜານໃຫ້ດີ ເພື່ອໃຫ້ ຮັກສາອຸນຫະພູມ ແລະ ຄວາມຊຸ່ມໄດ້ດີ



6. ນຳຜ້າຢາງ ແລະ ຜ້າກັນແສງມາປົກ ໜານກ້າໃຫ້ຮຽບຮ້ອຍດີ



## ໗. ການບົວລະບັດຮັກສາໜານກ້າ ແລະ ການດູແລຮັກສາເບ້ຍກາເຟ

ແກ່ນກາເຟຕ້ອງການອຸນຫະພູມທີ່ອົບອຸ່ນ ແລະ ຄວາມຊຸ່ມເພື່ອເຮັດໃຫ້ໄວຕໍ່ການແຕກໜໍ່

ປົກຄຸມໜານດ້ວຍຜ້າຢາງ





ເອົາຜ້າທີ່ປົກຄຸມໜານອອກ ເພື່ອອະນາໄມ ແລະ ຫົດນ້ຳ



ຫົດນ້ຳໃຫ້ໜານມີຄວາມຊຸ່ມຢູ່ຕະຫຼອດ



ອະນາໄມ ແລະ ຫຼົກຫຍ້າເປັນປະຈຳ





ຄ່ອຍໆນຳເອົາເຟືອງອອກທັນທີ ທີ່ສັງເກດເຫັນວ່າແກ່ນເລີ່ມແຕກໜໍ່



## ຈ. ການສັງເກດເບ້ຍເວລາທີ່ເໝາະສົມ ເພື່ອທີ່ຈະເອົາເຂົ້າເບົ້າ





ເບ້ຍກ້າທີ່ເໝາະສົມສໍາລັບການຍ້າຍເບົ້າ:

- ເມື່ອແກ່ນພືດເລີ່ມແຕກໃບ
- ເວລາແກ່ນພືດແຕກໃບຕ້ອງຮີບເອົາໃສ່ເບົ້າ

## ສ. ການກະກຽມປະສົມດິນສຳລັບຮ່າຍເບົ້າ

ຖ່ານເຜົາບົດໃຫ້ມຸ່ນ

ຝຸ່ນຄອກ ຂີ້ສັດໃຫຍ່ + ຂີ້ໄກ່

ແກບ

ດິນປູກຝັງ





ນຳສ່ວນຜະສົມທັງໝົດມາປົນໃຫ້ເຂົ້າກັນດີສັງເກດເບິ່ງບໍ່ໃຫ້ດິນປະສົມແໜ້ນເກີນໄປ

ນຳດິນມາຮ່ອນເພື່ອໃຫ້ໄດ້ດິນທີ່ມຸ່ນດີ

ຫຼັງຈາກນັ້ນນຳດິນມາຮ່າຍໃສ່ຖົງ, ສັ່ນຖົງໃຫ້ດິນລົງ ແລະ ປະໄວ້ປະມານ 1 ເດືອນ

## ຊ. ການດູແລຮັກສາເບົ້າກ່ອນໃສ່ເບ້ຍ



- ເອົາດິນໃສ່ເບົ້າໄວ້ກ່ອນ 1 ເດືອນ
- ເກັບໄວ້ບໍ່ໃຫ້ແສງແດດກ້າສ່ອງໂດຍກົງ
- ຫົດນ້ຳປົກກະຕິເພື່ອຮັກສາຄວາມຊຸ່ມ ໂດຍການປະສົມນ້ຳ EM ຫຼື ຝຸ່ນນ້ຳໃນອັດຕາສ່ວນ 1/10
- ຮັກສາບໍ່ໃຫ້ຫຍ້າຮົກ, ກວດກາ ແລະ ປາບສັດຕູພືດ ຫຼື ພະຍາດປົກກະຕິ

ຮັກສາໄວ້ໃນເຮືອນກ້າ

ອາຍຸ 6 ເດືອນແມ່ນນຳ

ມາໃສ່ໃນຖົງຂະໜາດ

7.6 X 17.7 ຊມ




ຮັກສາໄວ້ໃນເຮືອນກ້າ

ອາຍຸ 1 ປີແມ່ນນຳມາ

ໃສ່ໃນຖົງຂະໜາດ

7.5 X 23 ຊມ



## ຍ. ວິທີການເລືອກເບ້ຍທີ່ດີສຳລັບເອົາໃສ່ເບົ້າ






## ດ. ວິທີການເອົາເບ້ຍເຂົ້າເບົ້າ

ໜຶ່ງມື້ກ່ອນຮ່າຍເບົ້າ:

- ຫົດນໍ້າແຕ່ລະຖົງໃຫ້ມີຄວາມຊຸ່ມ
- ຫົດນໍ້າໜານກ້າເບ້ຍກ່ອນຈົ້ມເບ້ຍມາໃສ່ເບົ້າ
- ໃຊ້ວັດຖຸ ຫຼື ໄມ້ຊີໃຫ້ເປັນຮູເພື່ອບໍ່ໃຫ້ຮາກຄົດເວລາເອົາເບ້ຍລົງ



ເອົາເບ້ຍອອກຈາກໜານຢ່າງລະມັດລະວັງ

ດ້ວຍການໃຊ້ໄມ້ ຫຼື ຊ້ອນນ້ອຍຈົ້ມ ຫຼືກລ້ຽງ

ການດຶງ ຫຼື ກົ່ນເພື່ອບໍ່ໃຫ້ຮາກ ຫຼື ກົກຂາດ



## ວິທີການເອົາເບ້ຍເຂົ້າເບົ້າ (ຕໍ່)

### ການເອົາເບ້ຍເຂົ້າເບົ້າທີ່ຖືກຕ້ອງ

ກໍລະນີຮາກຍາວເກີນໄປ
ສາມາດໃຊ້ນິ້ວມືເດັດອອກໃຫ້
ພໍດີກັບຮູ



ຄ່ອຍໆເອົາເບ້ຍ ລົງໃນເບົ້າ

ຄ່ອຍໆບີບເບົ້າ ດິນໃຫ້ເຂົ້າຫາ ກັນ

ດຶງເບ້ຍຂຶ້ນຄ່ອຍໆໃຫ້ ຢູ່ໃນລະດັບດຽວກັບ ໜານກ້າ

ເນັ່ນດິນລົງໃຫ້ ດິນພຽງ

### ການເອົາເບ້ຍເຂົ້າເບົ້າທີ່ບໍ່ຖືກຕ້ອງ



ເອົາເບ້ຍລົງຕໍ່າເກີນໄປເຮັດໃຫ້ຮາກຄົດ ແລະ ເຮັດໃຫ້ຮາກຕາຍໄດ້



ການວາງເບ້ຍສູງເກີນໄປຈະເຮັດໃຫ້ລຳຕົ້ນຫັກໄດ້

## ໓. ບ່ອນເກັບຮັກສາເບ້ຍ

ອຸປະກອນທີ່ຕ້ອງກະກຽມໃນການເຮັດເຮືອນຮົ່ມປະກອບມີ:



ຜ້າກັນແສງ



ໄມ້ເຮັດຮົ້ວ ຫຼື ກະແຕະຮົ້ວ



ເສົາໄມ້

**ສາມາດໃຊ້ຫຍ້າຄາ, ຫຍ້າ ແຫ້ງ ຫຼື ຜັກກູດແທນໄດ້**

ນຳຜ້າກັນແສງ ຫຼື ໃບໄມ້ແຫ້ງມາປົກເຮືອນຮົ່ມເພື່ອປ້ອງ ກັນແສງແດດ, ລົມ ແລະ ຝົນ




- ເພື່ອລຸດຕົ້ນທຶນ: ນຳໃຊ້ວັດສະດຸທ້ອງຖິ່ນສຳລັບເຮັດເຮືອນຮົ່ມ ແລະ ຮົ້ວ (ຕົ້ນໄມ້ທຳມະຊາດ, ຕົ້ນຄໍ້ ຫຼື ຕົ້ນໄມ້ໃບໃຫຍ່, ໄມ້ປ່ອງ...)
- ບໍ່ໃຫ້ຮົ່ມຫຼາຍ (ຄວາມຮົ່ມບໍ່ໃຫ້ເກີນ 50%)
- ໃກ້ບ້ານເພື່ອສະດວກໃນການປົວລະບັດຮັກສາ ແລະ ຫົດນໍ້າ

**ຖ. ການບົວລະບັດຮັກສາສວນກ້າ**

ຫົດນໍ້າຜະສົມຝຸ່ນນໍ້າ ເປັນປົກກະຕິ ແລະ ນໍ້າສະໝຸນໄພ ກໍາລະນີມີພະຍາດ



ຫຼົກຫຍ້າ, ປາບສັດຕູພືດ ແລະ ຄວບຄຸມພະຍາດເປັນປະຈໍາ



ຕິດຕາມການເຕີບໂຕຂອງເບ້ຍ ແລະ ປັບໄລຍະຫ່າງຂອງຖົງ ເພື່ອໃຫ້ເບ້ຍຂະຫຍາຍໄວ ແລະ ປ້ອງກັນການຕິດເຊື້ອພະຍາດ





## ປື້ມຄູ່ມືທີ່ໄດ້ຮັບການຈັດພິມ:

1. ຄູ່ມືເຕັກນິກການກ້າເບ້ຍກາເຟ
2. ຄູ່ມືການຈັດການ ແລະ ບົວລະບັດຮັກສາຕົ້ນການເຟ
3. ຄູ່ມືການປຸງແຕ່ງ ແລະ ການຈັດປະເພດກາເຟ

ລາຍລະອຽດຂໍ້ມູນຕິດຕໍ່:

| ລ/ດ | ຊື່ ແລະ ນາມສະກຸນ | ໜ້າທີ່ຮັບຜິດຊອບ | ສະຖານທີ່ | ເບີໂທ |
|---|---|---|---|---|
| 1 | ນ ຈັນດີ ຄໍາອ້ອນ | ຫົວໜ້າກຸ່ມ | ບ້ານປ່ຽງ | 020 9720 4551 |
| 2 | ທ ໄຊເຮີຊີງ | ຫົວໜ້າກຸ່ມ | ບ້ານ ຜາຮີ້ງ | 030 228 2946 |
| 3 | ທ ຊາຍ ພິມມະໄຊ | ຫົວໜ້າເຕັກນິກ | ບ້ານ ຕົ້ນໃຕ້ | 030 229 4367 |
| 4 | ທ ໄລ ທຸມດາວົງ | ວິຊາການໜ່ວຍງານ ປູກຝັງ | ຫ້ອງການ ກະສິກໍາ ແລະ ປ່າໄມ້ ເມືອງ ຄູນ | 030 225 7597 |
| 5 | ນ ຈັນທະລີ ສີຟອງໄຊ | ວິຊາການຂະແໜງປູກຝັງ | ພະແນກ ກະສິກໍາ ແລະ ປ່າໄມ້ ແຂວງ ຊຽງຂວາງ | 020 5553 3278 |
| 6 | ທ ທອງໄຊ ຍິນດາລັດ | ວິຊາການສົ່ງເສີມ ກາເຟ | ໂຄງການ LURAS | 020 5542 9917 |

ສະໜັບສະໜູນໂດຍ:

DTEAP

ບໍລິການ-ສົ່ງເສີມກະສິກໍາຂອບດ້ານ ບສກຮ
LURAS Lao Upland Rural Advisory Service